**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********◇********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ. — ເລກທີ 118/ຄຊກລ.ຫກ.ກກ
ຫ້ອງການ — ນະຄອນຫຼວງວຽງຈັນ, ວັນທີ 23 MAY 2017

**ບົດບັນທຶກກອງປະຊຸມກຸ່ມວິຊາການກວດກູ້ ລບຕ ໄຕມາດ II, 2017**

**ຄັ້ງວັນທີ 3 ພຶດສະພາ 2017**

I. ຈຸດປະສົງ:

ເພື່ອສືບຕໍ່ປຶກສາຫາລືກ່ຽວກັບການແກ້ໄຂຂໍ້ມູນຜິດພາດທີ່ບັນທຶກເຂົ້າໃນຖານຂໍ້ມູນ IMSMA ຜ່ານມາ ແລະ ທົບທວນລະບຽບການສຳຫຼວດ ລບຕ ເພື່ອປັບປຸງໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ ແລະ ບັນຫາອື່ນໆຈຳນວນໜຶ່ງ, ລວມທັງການປະກອບສ້າງຂອງທີມສຳຫຼວດ NTS/TS. ຫົວຂໍ້ດັ່ງກ່າວນີ້ ແມ່ນໄດ້ປຶກສາຫາລືກັນແລ້ວຢູ່ໃນກອງປະຊຸມ TWG ຄັ້ງວັນທີ 31 ມີນາ 2017 ທີ່ຜ່ານມາ ແຕ່ຍັງບໍ່ທັນໄດ້ຂໍ້ສະຫຼຸບເປັນເອກະພາບກັນເທື່ອ. ໂດຍ ຄຊກລ ໄດ້ແຈ້ງໃຫ້ແຕ່ລະອົງການປະຕິບັດງານຄົ້ນຄວ້າກະກຽມ ແລະ ສົ່ງບົດຄຳຄິດເຫັນຂອງຕົນໃຫ້ ຄຊກລ ເພື່ອສືບຕໍ່ແລກປ່ຽນຄວາມຄິດເຫັນຮ່ວມກັນອີກເທື່ອໜຶ່ງຢູ່ໃນກອງປະຊຸມຄັ້ງນີ້ ແນໃສ່ເພື່ອປັບປຸງລະບຽບການສຳຫຼວດ ລບຕ ໃນປັດຈຸບັນເພື່ອໃຫ້ກາຍເປັນລະບຽບການສຳຫຼວດ ລບຕ ແຫ່ງຊາດ ທີ່ທຸກອົງການປະຕິບັດງານຕ້ອງໄດ້ຈັດຕັ້ງປະຕິບັດຕາມຢ່າງສອດຄ່ອງ.

II. ວັນເວລາ ແລະ ສະຖານທີ່ປະຊຸມ:

ກອງປະຊຸມໄດ້ໄຂຂຶ້ນເວລາ 08:45 ໂມງ ແລະ ປິດລົງເວລາ 12:00 ໂມງ ຂອງວັນທີ 03 ພຶດສະພາ 2017 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ.

III. ຜູ້ເຂົ້າຮ່ວມກອງປະຊຸມ:

ຜູ້ເຂົ້າຮ່ວມປະຊຸມທັງໝົດ 23 ທ່ານ, ມາຈາກບັນດາອົງການປະຕິບັດງານເກັບກູ້ລະເບີດເພື່ອມະນຸດສະທຳ, ຄູ່ຮ່ວມງານ ແລະ ຜູ້ໃຫ້ທຶນ, ດັ່ງລາຍລະອຽດຕໍ່ໄປນີ້: UXO Lao, NPA, MAG, HALO TRUST, Sterling International Group, UNDP, GICHD ແລະ ຕົວແທນຈາກກະຊວງການຕ່າງປະເທດສະຫະລັດອາເມຣິກາ. ລາຍລະອຽດຜູ້ເຂົ້າຮ່ວມ, ກະລຸນາເບິ່ງຕາມໃບລົງທະບຽນທີ່ຄັດຕິດມາພ້ອມ.

## IV. ສັງລວມການສົນທະນາ ແລະ ປຶກສາຫາລື:

ປະທານກອງປະຊຸມ, ທ່ານ ບຸນພະມິດ ໂສມວິຈິດ, ຮອງຫົວໜ້າຫ້ອງການ, ຜູ້ຊີ້ນໍາວຽກປະຕິບັດງານ ກ່າວໄຂກອງປະຊຸມຢ່າງເປັນທາງການ ແລະ ເຊີນຕາງໜ້າຈາກບັນດາອົງການປະຕິບັດງານປະກອບຄໍາເຫັນຕໍ່ຫົວຂໍ້ກອງປະຊຸມ, ໂດຍສະຫຼຸບໄດ້ດັ່ງລຸ່ມນີ້:

### 1. ການແກ້ໄຂຂໍ້ມູນຜິດພາດຢູ່ໃນຖານຂໍ້ມູນ IMSMA

ບັນຫານີ້ ທ່ານປະທານກອງປະຊຸມຊີ້ນໍາວ່າ: ແຕ່ລະອົງການປະຕິບັດງານຕ້ອງກວດກາແກ້ໄຂຄືນທັງໝົດບັນດາຂໍ້ມູນທີ່ຜິດພາດຜ່ານມາທີ່ໄດ້ບັນທຶກເຂົ້າໃນ IMSMA ຕ້ອງປະຕິບັດລະອຽດໃນທຸກຂັ້ນຕອນຄືນໃໝ່ ຕົວຢ່າງ: ປະເມີນຂໍ້ມູນເບື້ອງຕົ້ນສໍາລັບວຽກ NTS, ວິເຄາະຂໍ້ມູນລະອຽດ, ລົງເບິ່ງຫຼັກຖານຕົວຈິງຢູ່ພາກສະໜາມ/ບ້ານ, ເອົາຈຸດພິກັດຄືນໃໝ່. ໃຊ້ຄວາມພະຍາຍາມຢ່າງສົມເຫດສົມຜົນໃນການວິເຄາະ ແລະ ແກ້ໄຂຂໍ້ມູນຜິດພາດຮ່ວມກັນ ໂດຍບໍ່ຕ້ອງກັງວົນກ່ຽວກັບໄລຍະເວລາ ແລະ ຊັບພະຍາກອນ, ເນັ້ນໃສ່ເຮັດໃຫ້ໄດ້ຄຸນນະພາບດີທີ່ສຸດ. ລະບຽບການສໍາຫຼວດແຫ່ງຊາດ ແມ່ນເນັ້ນໃສ່ຊອກຫາຂໍ້ມູນທີ່ຖືກຕ້ອງທີ່ສຸດໃນເວລາສໍາຫຼວດບໍ່ແມ່ນວິຊາການ ແລະ ບັນທຶກຂໍ້ມູນທີ່ຖືກຕ້ອງເທົ່ານັ້ນເຂົ້າໃນຖານຂໍ້ມູນ IMSMA ເພື່ອຮັບປະກັນຄຸນນະພາບຂອງການສໍາຫຼວດດ້ານວິຊາການ ແລະ ການກວດກູ້ໃນຂັ້ນຕໍ່ໄປ.

### 2. ການທົບທວນແກ້ໄຂ ແລະ ປັບປຸງລະບຽບການສໍາຫຼວດ

ໂດຍລວມແລ້ວເຫັນວ່າລະບຽບການສໍາຫຼວດແຫ່ງຊາດຄວນລະບຸເນື້ອໃນ ແລະ ໃຫ້ລະອຽດຈະແຈ້ງໃນແຕ່ລະຫົວຂໍ້, ລະບຽບການສໍາຫຼວດສາມາດດັດແກ້ປ່ຽນແປງໄດ້ເພື່ອໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງໃນແຕ່ລະໄລຍະ ໂດຍອີງໃສ່ຂໍ້ທີ 2, ມາດຕາ 10 ຂອງມາດຕະຖານແຫ່ງຊາດ. ເພາະສະນັ້ນ, ຂໍ້ຄິດເຫັນຂອງແຕ່ລະອົງການປະຕິບັດງານກ່ຽວກັບລະບຽບການສໍາຫຼວດໃນປັດຈຸບັນ ທີ່ໄດ້ສັງລວມສົ່ງໃຫ້ ຄຊກລ ແລ້ວນັ້ນ ຈະຖືກສົ່ງກັບຄືນໃຫ້ບັນດາອົງການປະຕິບັດງານ ກວດກາ ແລະ ມີຄວາມເຫັນອີກເທື່ອໜຶ່ງເມື່ອ ຄຊກລ ສັງລວມແລ້ວ. ມາດຕະຖານປະຕິບັດງານສໍາຫຼວດແຫ່ງຊາດຈະເປັນບ່ອນອີງໃນການບັນທຶກ, ວິເຄາະ, ວາງແຜນໃນອະນາຄົດ ສໍາລັບຂະແໜງແກ້ໄຂບັນຫາລບຕ ພ້ອມທັງຈະເປັນບ່ອນອີງໃນການຈັດຕັ້ງປະຕິບັດ ຫຼື ພັດທະນາ, ປັບປຸງ ລະບຽບການປະຕິບັດງານ (SOP) ຂອງຕົນ ໃຫ້ສອດຄ່ອງກັບລະບຽບການດັ່ງກ່າວ.

3. ການປະກອບສ້າງຂອງທີມງານ NTS ແລະ TS

ອົງການປະຕິບັດງານ ຄວນແຍກຕ່າງຫາກລະຫວ່າງ ທີມ NTS ແລະ ທີມ TS ເພື່ອປະຕິບັດພາລະບົດບາດຕາມລັກສະນະຂອງມັນຢ່າງຈະແຈ້ງ. ເຖິງຢ່າງໃດກໍຕາມ ຖ້າວ່າມີບາງອົງການປະຕິບັດງານໃດທີ່ປະຕິບັດແຕກຕ່າງໄປຈາກນີ້ ຕົວຢ່າງ ອົງປະກອບຂອງທີມ NTS ມີ 6 ຄົນຕໍ່ທີມ ແມ່ນໃຫ້ມີການລົມທຽບກ່ຽວກັບຕົ້ນທຶນລະຫວ່າງທີມ NTS ແລະ TS ທີ່ມີ 6 ຄົນ ແລະ ທີມ NTS ທີ່ມີ 4 ຄົນ, ໂດຍສະເພາະແມ່ນອົງການ  NPA ແລະ ຄກລ. ນອກນີ້ ຍັງຈະຕ້ອງປະເມີນຂໍ້ດີ ແລະ ຂໍ້ອ່ອນຂອງແຕ່ລະເພດທີມເຫຼົ່ານີ້ດ້ວຍ.

## V. ພາກສະຫຼຸບ

ກອງປະຊຸມປິດລົງ ເວລາປະມານ 12:00 ໂມງ.

| ປະທານກອງປະຊຸມ | ຢັ້ງຢືນໂດຍ: | ຜູ້ບັນທຶກກອງປະຊຸມ |
|---|---|---|
| ບຸນພະມິດ ໂສມວິຈິດ<br>Mr.Bounphamith SOMVICHITH | ພົມມະຈັນ ຄຳມະນີຈັນ | ບົວພັນ ພັນທະລອນ |